ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງແຮງງານ ແລະ ສະຫວັດດີການສັງຄົມ
ຫ້ອງການ ຄະນະກຳມະການຄຸ້ມຄອງແຫ່ງຊາດ ເພື່ອແກ້ໄຂ
ບັນຫາລະເບີດບໍ່ທັນແຕກ ທີ່ຕົກຄ້າງ ຢູ່ ສປປ ລາວ

ນະຄອນຫລວງວຽງຈັນ, ວັນທີ: ...13 JUL 2020

# ໜັງສືລາຍງານ

ຮຽນ: ທ່ານ ຫົວໜ້າຫ້ອງການ ຄະນະກຳມະການຄຸ້ມຄອງ ເພື່ອແກ້ໄຂບັນຫາລະເບີດບໍ່ທັນແຕກ ທີ່ຕົກຄ້າງ ຢູ່ ສປປ ລາວ ທີ່ ນັບຖື.

ເລື່ອງ: ຜົນສຳເລັດກອງປະຊຸມກຸ່ມວິຊາການໂຄສະນາສຶກສາຄວາມສ່ຽງໄພຈາກ ລບຕ ປະຈຳໄຕມາດ 02 ປີ 2020 ແລະ ວາງທິດທາງແຜນການປະຈຳໄຕມາດທີ 03 ປີ 2020.

- ອີງຕາມ ແຜນຈັດກອງປະຊຸມກຸ່ມວິຊາການໂຄສະນາສຶກສາຄວາມສ່ຽງໄພຈາກ ລບຕ ປະຈຳໄຕມາດ 02, 2020 ແລະ ວາງທິດທາງແຜນການປະຈຳໄຕມາດທີ 03 ປີ 2020.

ໜ່ວຍງານໂຄສະນາສຶກສາຄວາມສ່ຽງໄພ ຈາກ ລບຕ ຫ້ອງການ ຄະນະກຳມະການຄຸ້ມຄອງແຫ່ງຊາດ ເພື່ອແກ້ໄຂບັນຫາລະເບີດບໍ່ທັນແຕກ ທີ່ຕົກຄ້າງ ຢູ່ ສປປ ລາວ (ຫ້ອງການ ຄຊກລ) ຂໍຖືເປັນກຽດຮຽນມາຍັງທ່ານເພື່ອຊາບ ກ່ຽວກັບຜົນສຳເລັດກອງປະຊຸມກຸ່ມວິຊາການ ໂຄສະນາຜົນຮ້າຍຂອງ ລບຕ ປະຈຳໄຕມາດ 2 ປີ 2020 ແລະ ວາງທິດທາງແຜນການປະຈຳໄຕມາດ ທີ 03 ປີ 2020. ກອງປະຊຸມດັ່ງກ່າວ ໄດ້ຈັດຂຶ້ນໃນ ວັນທີ 22 ມິຖຸນາ 2020 ທີ່ ຫ້ອງການ ຄຊກລ ເຊິ່ງລາຍລະອຽດມີ ດັ່ງລຸ່ມນີ້ :

## 1. ຈຸດປະສົງ

- ເພື່ອລາຍງານຜົນສຳເລັດໃນການຈັດຕັ້ງປະຕິບັດວຽກງານການໂຄສະນາສຶກສາຄວາມສ່ຽງໄພ ຈາກ ລບຕ ຂອງແຕ່ລະ ອົງການປະຕິບັດ ປະຈຳໄຕມາດ ທີ 2 ຂໍ້ສະດວກ, ຂໍ້ຫຍຸ້ງຍາກ, ສິ່ງທ້າທາຍ ແລະ ວິທີແກ້ໄຂ;
- ເພື່ອວາງທິດທາງແຜນການຈັດຕັ້ງປະຕິບັດວຽກງານການໂຄສະນາສຶກສາຄວາມສ່ຽງໄພ ຈາກ ລບຕ ຂອງ ແຕ່ລະ ອົງການປະຕິບັດ ປະຈຳໄຕມາດ 3 ປີ 2020.

## 2. ຜູ້ເຂົ້າຮ່ວມກອງປະຊຸມ

ກົມສື່ມວນຊົນ ກະຊວງຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ; ກົມສົມລະປະສຶກສາ ກະຊວງສຶກສາທິການ ແລະ ກິລາ; ກົມສາມັນສຶກສາ ກະຊວງສຶກສາທິການ ແລະ ກິລາ; ກົມຂະບວນການ ສູນກາງຊາວໜຸ່ມ ປະຊາຊົນປະຕິວັດລາວ; ອົງການສະຫະປະຊາຊາດ ເພື່ອການພັດທະນາ (UNDP); ອົງການເວີດສ໌ເອຢູເຄຊັນ (WEL); ອົງການເພື່ອມະນຸດສະທຳ ແລະ ການມີສ່ວນຮ່ວມ; ອົງການແມັກ; ອົງການນໍ້າໃຈນັກກິລາ; ໂຄງການເກັບກູ້ລະເບີດແຫ່ງຊາດລາວ; ອົງການ Halo Trust; ແລະ ບໍລິສັດລ້ານຊ້າງມີນິໂລນ ຊີເຜີ້ງ .

## 3. ການດຳເນີນກອງປະຊຸມ

ກອງປະຊຸມໄດ້ຮັບກຽດເປັນປະທານໂດຍ ທ່ານ ດວງສີ ທຳມະວົງ ຮອງຫົວໜ້າຫ້ອງການ ຄຊກລ ເຊິ່ງກອງປະຊຸມໄດ້ດຳເນີນຕາມວາລະ ດັ່ງນີ້:

ກອງປະຊຸມໄດ້ຮັບຟັງຜົນສຳເລັດຂອງກອງປະຊຸມວິຊາການໂຄສະນາສຶກສາຄວາມສ່ຽງໄພຈາກ ລບຕ ປະຈຳໄຕມາດ ທີ 01 ປີ 2020 ແລະ ຜົນສຳເລັດໃນການຈັດຕັ້ງປະຕິບັດວຽກງານໂຄສະນາສຶກສາຄວາມສ່ຽງໄພຈາກ ລບຕ ປະຈຳໄຕມາດ 02, 2020 ພ້ອມດຽວກັນນີ້ ກອງປະຊຸມໄດ້ຮັບຟັງການລາຍງານແຜນກິດຈະກຳວຽກງານໂຄສະນາສຶກສາຄວາມສ່ຽງໄພຈາກ ລບຕ ປະຈຳໄຕມາດ 03, 2020 ຂອງ ໜ່ວຍງານໂຄສະນາສຶກສາຄວາມສ່ຽງໄພຈາກ ລບຕ. ຕໍ່ຈາກຈາກນັ້ນ, ກອງປະຊຸມກໍໄດ້ຮັບຟັງການລາຍງານກ່ຽວກັບອຸບັດຕິເກດທີ່ເກີດຂຶ້ນ ໃນໄລຍະຕົ້ນປີ 2020 ມາຮອດປະຈຸບັນ ແລະ ຫຼງຈາກນັ້ນ, ຕາງໜ້າແຕ່ລະພາກສ່ວນທີ່ເຮັດວຽກງານໂຄສະນາສຶກສາຄວາມສ່ຽງໄພຈາກ ລບຕ ເປັນຕົ້ນແມ່ນ: ກົມສື່ມວນຊົນ ກະຊວງຖະແຫຼ່ງຂ່າວ,ວັດທະນະທຳ ແລະ ທ່ອງທ່ຽວ; ກົມສົນລະປະສຶກສາ ກະຊວງສຶກສາທິການ ແລະ ກິລາ; ກົມສາມັນສຶກສາ ກະຊວງສຶກສາທິການ ແລະ ກິລາ; ກົມຂະບວນການ ສູນກາງຊາວໜຸ່ມ ປະຊາຊົນປະຕິວັດລາວ; ອົງການເວີດສ໌ເອຢູເຄຊັນ (WEL); ອົງການເພື່ອມະນຸດສະທຳ ແລະ ການມີສ່ວນຮ່ວມ; ອົງການແມັກ,; ອົງການນ້ຳໃຈນັກກິລາ; ໂຄງການເກັບກູ້ລະເບີດແຫ່ງຊາດລາວ; ອົງການ Halo Trust; ແລະ ບໍລິສັດລ້ານຊ້າງມິນີໂລນ ຊຶ່ງເຂົ້າກໍໄດ້ລາຍງານຜົນສຳເລັດ, ຂໍ້ສະດວກ, ຂໍ້ຫຍຸ້ງຍາກ, ບົດຮຽນທີ່ຖອດຖອນໄດ້ ໃນການຈັດຕັ້ງປະຕິບັດວຽກງານ ປະຈຳໄຕມາດ 02 ພ້ອມທັງວາງທິດທາງແຜນການປະຈຳໄຕມາດ ທີ 03.

4. ຜົນສຳເລັດຂອງກອງປະຊຸມ

- ກອງປະຊຸມໄດ້ຮັບຟັງການລາຍງານ ຈາກ ອົງການປະຕິບັດວຽກງານໂຄສະນາຄວາມສ່ຽງໄພ ຈາກ ລບຕ ກ່ຽວກັບ ຂໍ້ສະດວກ, ຂໍ້ຫຍຸ້ງຍາກ ແລະ ສິ່ງທ້າທາຍ ໃນການຈັດຕັ້ງປະຕິບັດວຽກງານ ປະຈຳໄຕມາດ 02 ເຊິ່ງ ແຕ່ລະ ອົງການ ແມ່ນບໍ່ສາມາດເຄື່ອນໄຫວກິດຈະກຳໃນໄລຍະການແຜ່ລະບາດພະຍາດ COVID- 19;
- ສຳລັບທິດທາງແຜນການປະຈຳໄຕມາດ 03, 2020 ແຕ່ລະ ອົງການປະຕິບັດ ຈະໄດ້ສືບຕໍ່ປະຕິບັດກິດຈະກຳທີ່ຍັງຄົງຄ້າງ ຂອງ ວຽກປະຈຳໄຕມາດ 02 ແລະ ວາງແຜນການຈັດຕັ້ງປະຕິບັດແຜນການປະຈຳໄຕມາດ 03 ໂດຍຈະປະຕິບັດກິດຈະກຳທັງສອງໄຕມາດໄປພ້ອມໆກັນ ແຕ່ການປະຕິບັດກິດຈະກຳຈະໄດ້ປະຕິບັດຕາມແຈ້ງການຂອງລັດຖະບານກ່ຽວກັບມາດຕະການຜ່ອນຜັນ ຂອງ ຄະນະສະເພາະກິດຄວບຄຸມການແຜ່ລະບາດພະຍາດ COVID- 19 ຢ່າງເຂັ້ມງວດ;
- ກອງປະຊຸມໄດ້ຮັບຊາບສະຖິຕິຜູ້ຖືກເຄາະຮ້າຍ ຈາກ ລບຕ ໃນໄລຍະຕົ້ນປີ 2020 ມາຮອດປະຈຸບັນມີຜູ້ຖືກເຄາະຮ້າຍຈຳນວນ 11 ຄົນ ໃນນີ້ອຸບັດຕິເຫດເກີດຂຶ້ນ ຫລາຍກວ່າໝູ່ ຢູ່ ແຂວງຊຽງຂວາງ ແລະ ແຂວງທີ່ເສຍຊີວິດຫລາຍ ແມ່ນ ແຂວງສະຫວັນນະເຂດ;

5. ຂໍ້ສະເໜີ

- ກອງປະຊຸມໄດ້ສະເໜີໃຫ້ ຫ້ອງການ ຄຊກລ ປັບປຸງສື່ໂຄສະນາໂຄສະນາຄວາມສ່ຽງໄພ ຈາກ ລບຕ ແລະ ສ້າງປຶ້ມຄູ່ມືໃນການໂຄສະນາຜົນຮ້າຍ ຂອງ ລບຕ;

ດັ່ງນັ້ນ, ຈຶ່ງຮຽນມາຍັງທ່ານເພື່ອຊາບ ແລະ ໃຫ້ທິດຊີ້ນຳຕາມເຫັນສົມຄວນດ້ວຍ

ປະທານກອງປະຊຸມ

ຜູ້ລາຍງານ

Vilayphone

ຫ້ອງການ ຄຊກລ

ດວງສີ ທຳມະວົງ